ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

LFX ບໍລິສັດ ຕະຫຼາດແລກປ່ຽນ
ເງິນຕາຕ່າງປະເທດລາວ ຈຳກັດ

ເລກທີ...114.../ຕລຕ
ນະຄອນຫຼວງວຽງຈັນ, ວັນທີ 14 ກໍລະກົດ 2025

# ລະບຽບ
# ວ່າດ້ວຍການດຳເນີນງານຂອງ ຕະຫຼາດແລກປ່ຽນເງິນຕາຕ່າງປະເທດລາວ

- ອີງຕາມ ຂໍ້ຕົກລົງວ່າດ້ວຍຕະຫຼາດແລກປ່ຽນເງິນຕາຕ່າງປະເທດ ສະບັບເລກທີ 1161/ທຫລ, ລົງວັນທີ 29 ຕຸລາ 2024;
- ອີງຕາມ ກົດລະບຽບຂອງບໍລິສັດຕະຫຼາດແລກປ່ຽນເງິນຕາຕ່າງປະເທດລາວ ຈຳກັດ ສະບັບເລກທີ 20/ຕລຕ, ລົງວັນທີ 20 ກຸມພາ 2025.

**ຜູ້ອຳນວຍການ ບໍລິສັດ ຕະຫຼາດແລກປ່ຽນເງິນຕາຕ່າງປະເທດລາວ ຈຳກັດ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ລະບຽບສະບັບນີ້ ກຳນົດຫຼັກການ, ເງື່ອນໄຂ, ວິທີການ ແລະ ມາດຕະການກ່ຽວກັບການຄຸ້ມຄອງການບໍລິການ ແລະ ການດຳເນີນງານຂອງ ບໍລິສັດ ຕະຫຼາດແລກປ່ຽນເງິນຕາຕ່າງປະເທດລາວ ຈຳກັດ (ບໍລິສັດ ຕລຕ) ເພື່ອໃຫ້ບໍລິການ ຕະຫຼາດແລກປ່ຽນເງິນຕ່າງປະເທດລາວ (ຕະຫຼາດ LFX) ຜ່ານລະບົບແລກປ່ຽນເງິນຕາຕ່າງປະເທດ (Foreign Exchange System = FXS) ສອດຄ່ອງກັບແນວທາງນະໂຍບາຍ ແລະ ລະບຽບການທີ່ທະນາຄານແຫ່ງ ສປປ ລາວ (ທຫລ) ກຳນົດ ແຕ່ລະໄລຍະ ແນໃສ່ປະກອບສ່ວນໃນການຮັກສາສະຖຽນລະພາບເງິນຕາ, ການພັດທະນາເສດຖະກິດ, ການດຳເນີນທຸລະກິດທີ່ມີປະສິດທິພາບ, ອຳນວຍຄວາມສະດວກ ແລະ ຮັບປະກັນຄວາມປອດໄພໃນການໃຫ້ບໍລິການລູກຄ້າທີ່ມີຄວາມຕ້ອງການຊື້-ຂາຍເງິນຕາຕ່າງປະເທດ.

**ມາດຕາ 2 ປະເພດການໃຫ້ບໍລິການ**

ບໍລິສັດ ຕລຕ ສະໜອງການບໍລິການ ຊື້-ຂາຍ ເງິນຕາຕ່າງປະເທດ ຜ່ານເງິນກີບ ໃຫ້ກັບຜູ້ໃຊ້ບໍລິການຜ່ານລະບົບ FXS ເຊິ່ງຜູ້ໃຊ້ບໍລິການ ສາມາດເຂົ້າລະບົບໃນຮູບແບບອອນລາຍ ຜ່ານຊ່ອງທາງທີ່ບັນດາທະນາຄານທຸລະກິດສາມາດໃຫ້ບໍລິການໄດ້ ເປັນຕົ້ນ ຜ່ານແອັບພລິເຄຊັນທາງມືຖື Mobile Banking, ເວບໄຊທາງຄອມພິວເຕີ (Internet Banking) ຫຼື ຊ່ອງທາງອື່ນ.

**ມາດຕາ 3 ຂອບເຂດການນຳໃຊ້**

ລະບຽບສະບັບນີ້ ນຳໃຊ້ສຳລັບ ບໍລິສັດ ຕລຕ, ສະມາຊິກ, ບໍລິສັດທີ່ມີສ່ວນຮ່ວມກັບການດຳເນີນທຸລະກຳ ຜ່ານຕະຫຼາດແລກປ່ຽນເງິນຕາຕ່າງປະເທດລາວ (LFX) ແລະ ຜູ້ໃຊ້ບໍລິການທີ່ເປັນ ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງຕ່າງໆທີ່ເຂົ້າຮ່ວມດຳເນີນທຸລະກຳການ ຊື້-ຂາຍ ເງິນຕາຕ່າງປະເທດ ຢູ່ LFX ໃນແຕ່ລະໄລຍະ.

**ມາດຕາ 4 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນລະບຽບສະບັບນີ້ ມີຄວາມໝາຍດັ່ງນີ້:

1. **ລະບົບຕະຫຼາດແລກປ່ຽນເງິນຕາຕ່າງປະເທດລາວ** ເອີ້ນຊື່ຫຍໍ້ວ່າ ລະບົບ FXS ໝາຍເຖິງ ລະບົບຕະຫຼາດແລກປ່ຽນເງິນຕາຕ່າງປະເທດ ທີ່ໃຫ້ບໍລິການໂດຍ ບໍລິສັດ ຕລຕ ຕາມການອະນຸຍາດຂອງ ທຫລ;

2. **ທຸລະກຳ** ໝາຍເຖິງ ການດຳເນີນການຊື້-ຂາຍແລກປ່ຽນເງິນຕາຕ່າງປະເທດ ດ້ວຍການໃຊ້ເງິນກີບເພື່ອຊື້ເງິນຕາຕ່າງປະເທດ ຫຼື ການຂາຍເງິນຕາຕ່າງປະເທດ ເພື່ອແລກເອົາເງິນກີບ;

3. **ບັນຊີກະເປົາ (Wallet)** ໝາຍເຖິງ ພື້ນທີ່ດິຈິຕອນທີ່ເກັບຮັກສາເງິນສະກຸນຕ່າງໆຂອງຜູ້ໃຊ້ບໍລິການ ເຊິ່ງມີລັກສະນະຄ້າຍຄືກັບບັນຊີເງິນຝາກທະນາຄານ (Virtual Bank account) ທີ່ອອກແບບສະເພາະ ການຊື້-ຂາຍ ເງິນຕາຕ່າງປະເທດ ໃນລະບົບ FXS;

4. **ຜູ້ໃຫ້ບໍລິການ** ໝາຍເຖິງ ບໍລິສັດ ຕລຕ ເຊິ່ງເປັນນິຕິບຸກຄົນທີ່ໄດ້ຮັບໃບອະນຸຍາດດຳເນີນທຸລະກິດຕະຫຼາດແລກປ່ຽນເງິນຕາຕ່າງປະເທດ ໂດຍ ທຫລ;

5. **ບໍລິສັດທີ່ມີສ່ວນຮ່ວມ** ໝາຍເຖິງ ພາກສ່ວນອຳນວຍຄວາມສະດວກໃນການເຊື່ອມຕໍ່ລະບົບ, ຜູ້ພັດທະນາລະບົບ ແລະ ອື່ນໆ ຕາມການກຳນົດຂອງ ບໍລິສັດ ຕລຕ;

6. **ຜູ້ໃຊ້ບໍລິການ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ມີພູມລຳເນົາຢູ່ ສປປ ລາວ, ມີບັນຊີເງິນຝາກຢູ່ທະນາຄານທຸລະກິດ, ມີ Mobile Banking/Internet Banking ຂອງທະນາຄານສະມາຊິກໃດໜຶ່ງ ຫຼື ຕາມການອະນຸຍາດ ຂອງ ທຫລ;

7. **ທະນາຄານສະມາຊິກ** ໝາຍເຖິງ ທະນາຄານທຸລະກິດ ທີ່ມີເງື່ອນໄຂຄົບຖ້ວນ ແລະ ໄດ້ຮັບອະນຸຍາດ ໃຫ້ເຂົ້າເປັນສະມາຊິກຂອງ ຕະຫຼາດແລກປ່ຽນເງິນຕາຕ່າງປະເທດລາວ. ສະມາຊິກ ອາດເປັນຜູ້ຖືຮຸ້ນໃນ ບໍລິສັດ ຕະຫຼາດແລກປ່ຽນເງິນຕາຕ່າງປະເທດລາວ ຈຳກັດ ຫຼື ບໍ່ ກໍ່ໄດ້;

8. **ຄຳສັ່ງ** ໝາຍເຖິງ ຄຳສັ່ງ ຊື້ ຫຼື ຂາຍ ເງິນຕາຕ່າງປະເທດ ຂອງຜູ້ໃຊ້ບໍລິການ ໃນຕະຫຼາດແລກປ່ຽນເງິນຕາຕ່າງປະເທດລາວ;

9. **ຄູ່ສະກຸນເງິນ** ໝາຍເຖິງ **ການຈັບຄູ່ລະຫວ່າງສະກຸນເງິນ 2 ປະເທດ** ທີ່ໃຊ້ເປັນສື່ກາງໃນການແລກປ່ຽນເງິນຕາຕ່າງປະເທດລະຫວ່າງກັນ;

10. **ການຈັບຄູ່** ໝາຍເຖິງ ຄຳສັ່ງທີ່ສາມາດຈັບຄູ່ໄດ້ຕາມປະລິມານຊື້ ຫຼື ຂາຍ ໃນອັດຕາແລກປ່ຽນທີ່ກົງກັນ ຫຼື ເຂົ້າກັນໄດ້ ແລະ ຖ້າຈັບຄູ່ບໍ່ໄດ້ໝົດ ປະລິມານສ່ວນທີ່ຍັງເຫຼືອແມ່ນຈະຍັງລໍຖ້າຈັບຄູ່ຢູ່ໃນລະບົບຈົນກວ່າຄຳສັ່ງດັ່ງກ່າວຈະຖືກຍົກເລີກ;

11. **ຂອບການກຳນົດອັດຕາແລກປ່ຽນ** ໝາຍເຖິງຂອບເຂດການກຳນົດ ອັດຕາແລກປ່ຽນຊື້-ຂາຍເງິນຕາຕ່າງປະເທດປະຈຳວັນ ທີ່ກຳນົດໂດຍ ທຫລ ເພື່ອໃຫ້ສອດຄ່ອງກັບລະບຽບການກຳນົດອັດຕາແລກປ່ຽນຂອງ ທຫລ;

12. **USER ID** ໝາຍເຖິງ ຊື່ຜູ້ໃຊ້ບໍລິການ (ຊື່ລະຫັດ) ທີ່ໃຊ້ເຂົ້າເຖິງລະບົບບໍລິການ ຂອງ ບໍລິສັດ ຕະຫຼາດແລກປ່ຽນເງິນຕາຕ່າງປະເທດລາວ ຈໍາກັດ ໂດຍຜູ້ໃຊ້ບໍລິການຈະຕ້ອງໄດ້ລົງທະບຽນ User Mobile Banking ຫຼື Internet Banking ໃດໜຶ່ງນໍາບັນດາທະນາຄານສະມາຊິກເພື່ອເຂົ້າເຖິງການບໍລິການຂອງ ຕະຫຼາດແລກປ່ຽນເງິນຕາຕ່າງປະເທດລາວ;

13. **ການຊື້-ຂາຍ ເງິນຕາຕ່າງປະເທດ ທີ່ບໍ່ຍຸຕິທໍາ** ໝາຍເຖິງ ພຶດຕິກໍາຂອງບຸກຄົນ ຫຼື ນິຕິບຸກຄົນ ທີ່ ເຮັດໃຫ້ ລາຄາ ແລະ/ຫຼື ປະລິມານເງິນຕາ ຜິດປົກກະຕິຈາກສະພາວະຕະຫຼາດທີ່ແທ້ຈິງ, ສ້າງຄວາມເສຍ ຫາຍ ໃຫ້ແກ່ຜູ້ມີສ່ວນຮ່ວມອື່ນ ຫຼື ລະບົບການເງິນ;

14. **ການຜັນຜວນແຮງຂອງອັດຕາແລກປ່ຽນ** ໝາຍເຖິງ ການຂຶ້ນ-ລົງ ຂອງອັດຕາແລກປ່ຽນທີ່ສູງ ຫຼື ຕໍ່າ ໂດຍປຽບທຽບກັບຄ່າສະເລ່ຍ (ອັດຕາແລກປ່ຽນອ້າງອີງ) ທີ່ ທະນາຄານແຫ່ງ ສປປ ລາວ ກໍານົດໃນແຕ່ລະ ໄລຍະ (ຖ້າຕໍ່າກວ່າ 1% ຜັນຜວນຕໍ່າ, ລະຫວ່າງ 1%-4% ຜັນຜວນປານກາງ ແລະ ສູງກວ່າ 4% ຜັນຜວນ ແຮງ).

## ໝວດທີ 2
## ການດໍາເນີນງານຂອງ ຕະຫຼາດແລກປ່ຽນເງິນຕາຕ່າງປະເທດລາວ

### ມາດຕາ 5 ວັນ ແລະ ເວລາການໃຫ້ບໍລິການຂອງຕະຫຼາດ

ລະບົບ FXS ເປີດໃຫ້ບໍລິການຕາມ ວັນລັດຖະການ ແລະ ໃນເວລາ ດັ່ງນີ້:

1. ວັນໃຫ້ບໍລິການ: ວັນຈັນ-ອາທິດ;
2. ໂມງໃຫ້ບໍລິການ: ເປີດຕະຫຼາດ ເວລາ 09:00ໂມງ ແລະ ປິດຕະຫຼາດ ເວລາ 15:00ໂມງ;

ວັນ ແລະ ເວລາ ການໃຫ້ບໍລິການຕາມທີ່ໄດ້ກໍານົດໄວ້ຂ້າງເທິງນີ້ ອາດມີການປັບປ່ຽນຕາມແຈ້ງການ ຂອງ ທຫລ ໃນແຕ່ລະໄລຍະ.

ບໍລິສັດ ຕລຕ ຈະເປີດບໍລິການ ລະບົບ FXS ຄືນໃໝ່ທັນທີ ເມື່ອເຫັນວ່າສາເຫດໃນການປິດຕະຫຼາດ ທີ່ໄດ້ກໍານົດໄວ້ໃນ ມາດຕາ 13 ໄດ້ຮັບການແກ້ໄຂສໍາເລັດ.

### ມາດຕາ 6 ປະເພດການ ຊື້-ຂາຍ ເງິນຕາຕ່າງປະເທດ

ບໍລິສັດ ຕລຕ ໃຫ້ການບໍລິການການຊື້-ຂາຍເງິນຕາຕ່າງປະເທດຮູບແບບທັນທີ (Spot) ແລະ ຮູບແບບ ອື່ນຕາມການອະນຸຍາດຂອງ ທະນາຄານແຫ່ງ ສປປ ລາວ ໃນແຕ່ລະໄລຍະ.

### ມາດຕາ 7 ຄູ່ສະກຸນເງິນ

ລະບົບ FXS ຮອງຮັບການດໍາເນີນທຸລະກໍາການ ຊື້-ຂາຍ ເງິນຕາຕ່າງປະເທດລະຫວ່າງ ຄູ່ສະກຸນເງິນກີບ ແລະ ເງິນຕາຕ່າງປະເທດ 3 ສະກຸນຄື: ໂດລາ, ບາດ ແລະ ຢວນ ເຊິ່ງຜູ້ໃຊ້ບໍລິການ ສາມາດຂາຍເງິນກີບ ເພື່ອ ແລກເອົາເງິນຕາຕ່າງປະເທດ ຫຼື ຂາຍເງິນຕາຕ່າງປະເທດສາມສະກຸນດັ່ງກ່າວ ເພື່ອແລກເອົາເງິນກີບ.

**ມາດຕາ 8 ອັດຕາ** 

ອັດຕາໃນການຊື້-ຂາຍ ເງິນຕາຕ່າງປະເທດໃນລະບົບ FXS ແມ່ນອີງຕາມແຈ້ງການຂອງ ທຫລ ແລະ ບໍລິສັດ ຕລຕ ຈະອອກແຈ້ງການໃຫ້ລູກຄ້າ ຊາບໃນແຕ່ລະໄລຍະ ທີ່ມີການປັບປຸງ.

**ມາດຕາ 9 ການສົ່ງ ຄຳສັ່ງຊື້, ຄຳສັ່ງຂາຍ**

ຜູ້ໃຊ້ບໍລິການ ສາມາດສົ່ງຄຳສັ່ງຊື້ ຫຼື ຂາຍ ເງິນຕາຕ່າງປະເທດ ໃນລະບົບ FXS ໂດຍບໍ່ຈຳກັດຈຳນວນຄັ້ງ, ແຕ່ຕ້ອງບໍ່ຫຼຸດອັດຕາຂັ້ນຕ່ຳທີ່ໄດ້ກຳນົດໃນແຕ່ລະໄລຍະ.

ຂັ້ນຕອນການສົ່ງຄຳສັ່ງ ຊື້ ຫຼື ຂາຍ ເງິນຕາຕ່າງປະເທດ, ຫຼັງຈາກທີ່ຜູ້ໃຊ້ບໍລິການ ເຂົ້າສູ່ລະບົບ FXS ຜ່ານຊ່ອງທາງທີ່ບັນດາທະນາຄານທຸລະກິດໃຫ້ບໍລິການ ແລະ ຝາກເງິນເຂົ້າກະເປົາເງິນໃນລະບົບ FXS ສຳ ເລັດ ສາມາດດຳເນີນຕາມຂັ້ນຕອນ ດັ່ງນີ້:

1. ກົດເຂົ້າໄອຄອນ "ແລກປ່ຽນ";
2. ເລືອກສະກຸນເງິນທີ່ຕ້ອງການຊື້-ຂາຍ ("USD", "THB", "CNY");
3. ເລືອກປຸ່ມ "ຊື້" ຫຼື "ຂາຍ";
4. ກຳນົດອັດຕາແລກປ່ຽນທີ່ຕ້ອງການຊື້ ໃສ່ຫ້ອງ "ລາຄາຊື້" ຫຼື "ລາຄາຂາຍ";
5. ປ້ອນຈຳນວນເງິນ ໃສ່ຫ້ອງ "ຈາກ LAK+ ຄ່າທຳນຽມ" ເພື່ອປ້ອນຈຳນວນເງິນເປັນເງິນກີບ ຫຼື ປ້ອນຈຳນວນເງິນ ໃສ່ຫ້ອງ "ເປັນ USD/THB/CNY" ເພື່ອປ້ອນຈຳນວນເງິນເປັນເງິນຕາ, ຫຼັງຈາກນັ້ນລະບົບ FXS ຈະຄຳນວນຈຳນວນເງິນທີ່ຄູ່ກັນກັບສະກຸນເງິນທີ່ຕ້ອງການຊື້ໃຫ້ອັດຕະໂນມັດ;
6. ເລືອກຈຸດປະສົງໃນການແລກປ່ຽນ ຢູ່ຫ້ອງ "ເລືອກຈຸດປະສົງ", ຫຼັງຈາກນັ້ນ ເລືອກຈຸດປະສົງທີ່ຖືກຕ້ອງ ຫຼື ເໝາະສົມກັບການສະເໜີຊື້-ຂາຍເງິນຕາດັ່ງກ່າວ;
7. ກົດປຸ່ມ "ຢືນຢັນຊື້" ຫຼື "ຢືນຢັນຂາຍ" ເພື່ອຢືນຢັນລາຍການ. ພາຍຫຼັງສຳເລັດ ລະບົບຈະຂຶ້ນຂໍ້ຄວາມສະແດງລາຍລະອຽດຂອງຄຳສັ່ງຊື້ ເພື່ອໃຫ້ກວດຄືນ ແລະ ຢືນຢັນອີກຄັ້ງ, ຖ້າຖືກຕ້ອງສາມາດກົດ "ຢືນຢັນ" ແລ້ວລະບົບຈະສະແດງຂໍ້ຄວາມແຈ້ງວ່າ "ສຳເລັດ".

ບໍລິສັດ ຕລຕ ຈະດຳເນີນການລຶບລ້າງຄຳສັ່ງຊື້-ຂາຍເງິນຕາຕ່າງປະເທດ (Clear orders) ໃນແຕ່ລະມື້ ສຳລັບທຸລະກຳທີ່ບໍ່ຖືກຈັບຄູ່ຊື້-ຂາຍ ພາຍໃນວັນດັ່ງກ່າວ ຫຼັງຈາກປິດຕະຫຼາດ ແລະ ຍອດເງິນທີ່ເຫຼືອໃນຄຳສັ່ງຊື້-ຂາຍໃນລະບົບ ຈະຖືກໂອນກັບຄືນເຂົ້າປະເປົາເງິນ (LFX Wallet) ຂອງລູກຄ້າໂດຍອັດຕະໂນມັດ.

**ມາດຕາ 10 ກົນໄກການຈັບຄູ່ຊື້-ຂາຍ ເງິນຕາຕ່າງປະເທດ**

ຫຼັງຈາກທີ່ຜູ້ໃຊ້ບໍລິການສົ່ງຄຳສັ່ງສະເໜີຊື້-ຂາຍ ເງິນຕາຕ່າງປະເທດສຳເລັດ ລະບົບ FXS ຈະດຳເນີນການກວດ ແລະ ຈັບຄູ່ລາຍການ, ລະບົບຈະດຳເນີນການຈັບຄູ່ ຜູ້ຊື້ ແລະ ຜູ້ຂາຍ ໃຫ້ຕາມຄວາມຕ້ອງການຂອງຕະຫຼາດ, ຜູ້ໃຊ້ບໍລິການ ຈະບໍ່ສາມາດກຳນົດຄູ່ຂອງຕົນໄດ້ ເຊິ່ງຈະມີເງື່ອນໄຂ ດັ່ງນີ້:

1. ຄູ່ຊື້-ຂາຍທັງສອງຝ່າຍຈະເປັນຜູ້ໄດ້ຮັບຜົນປະໂຫຍດຮ່ວມທັງ 2 ຝ່າຍ ຕົວຢ່າງ: ຜູ້ຂາຍຕັ້ງອັດຕາໂດລາ 21,500 ກີບ ຈະຖືກຈັບຄູ່ກັບ ຜູ້ຊື້ຕັ້ງອັດຕາໂດລາ 21,500 ກີບ, ລະບົບຈະຈັບຄູ່ເຮັດໃຫ້ຜູ້ຊື້-ຂາຍໄດ້ຕາມທີ່ຕົນຕ້ອງການ;

2. ໃນກໍລະນີທີ່ອັດຕາແລກປ່ຽນບໍ່ກົງກັນ ແຕ່ລາຄາຂາຍໜ້ອຍກວ່າລາຄາຊື້ (ເຊັ່ນ ຂາຍໂດລາ 21,500 ກີບ ແຕ່ຊື້ 21,550 ກີບ) ລະບົບກໍ່ຈະດຳເນີນການຈັບຄູ່ທັນທີ. ຕົວຢ່າງ: ຜູ້ຂາຍຕັ້ງອັດຕາໂດລາ 21,500 ກີບ ຈຳນວນ $100 ຈະຖືກຈັບຄູ່ກັບ ຜູ້ຊື້ຕັ້ງອັດຕາໂດລາ 21,550 ກີບຈຳນວນ 2,155,000 ກີບ. ລະບົບຈະຈັບຄູ່ ເຊິ່ງຜູ້ຊື້ຈະໄດ້ອັດຕາທີ່ຖືກລົງ ແລະ ຊື້ດ້ວຍເງິນກີບຈຳນວນ 2,150,000 ເທົ່ານັ້ນ ແລະ ມີສ່ວນເຫຼືອເຂົ້າກະເປົາຄືນ 5,000 ກີບ;

3. ໃນກໍລະນີທີ່ອັດຕາແລກປ່ຽນບໍ່ກົງກັນ ແຕ່ລາຄາຂາຍຫຼາຍກວ່າລາຄາຊື້ (ເຊັ່ນ ຂາຍໂດລາ 21,500 ກີບ ແຕ່ຊື້ 21,000 ກີບ) ລະບົບຈະບໍ່ຈັບຄູ່ ແລະ ລໍຖ້າລາຄາທີ່ເໝາະສົມສຳລັບທັງສອງຝ່າຍ;

4. ການຈັບຄູ່ຈະອີງໃສ່ເວລາທີ່ໄດ້ຕັ້ງໄວ້ກ່ອນ ຈະຖືກຈັບຄູ່ກ່ອນ;

5. ຖ້າບໍ່ມີຄູ່ທີ່ເໝາະສົມ ຜູ້ຊື້-ຂາຍ ຈະຕ້ອງລໍຖ້າຈົນກວ່າຈະມີການຕັ້ງອັດຕາທີ່ເໝາະສົມ;

6. ການຕັ້ງຊື້ ຫຼື ຂາຍຄັ້ງໜຶ່ງ ສາມາດຖືກຈັບຄູ່ໄດ້ຫຼາຍກວ່າໜຶ່ງຄູ່ ຈົນກວ່າມູນຄ່າທີ່ຕັ້ງຈະແລກປ່ຽນສຳເລັດ ຫຼື ຜູ້ໃຊ້ຍົກເລີກລາຍການດັ່ງກ່າວດ້ວຍຕົນເອງ ຫຼື ລະບົບລ້າງລາຍການທີ່ຄ້າງອອກອັດຕະໂນມັດ ຕາມການຕັ້ງຄ່າໃນແຕ່ລະໄລຍະ.

**ມາດຕາ 11 ການກຳນົດອັດຕາແລກປ່ຽນເປີດ-ປິດຕະຫຼາດ**

ອັດຕາແລກປ່ຽນໃນການເປີດ-ປິດຕະຫຼາດ ຖືກກຳນົດດັ່ງນີ້:

1. ອັດຕາແລກປ່ຽນເປີດຕະຫຼາດ: ກຳນົດເອົາອັດຕາແລກປ່ຽນຂອງລາຍການທຳອິດທີ່ຖືກຈັບຄູ່ ຫຼັງຈາກທີ່ຕະຫຼາດເປີດໃຫ້ບໍລິການ ເປັນບ່ອນອີງ;

2. ອັດຕາແລກປ່ຽນປິດຕະຫຼາດ: ກຳນົດເອົາອັດຕາແລກປ່ຽນຂອງລາຍການສຸດທ້າຍທີ່ຈັບຄູ່ສຳເລັດພາຍໃນມື້ທີ່ເປີດໃຫ້ບໍລິການເປັນບ່ອນອີງ.

**ມາດຕາ 12 ການກຳນົດອັດຕາແລກປ່ຽນສູງສຸດ ແລະ ຕ່ຳສຸດໃນການແລກປ່ຽນຊື້-ຂາຍພາຍໃນມື້**

ການກຳນົດອັດຕາແລກປ່ຽນສູງສຸດ ແລະ ຕ່ຳສຸດໃນການ ຊື້-ຂາຍ ເງິນຕາຕ່າງປະເທດພາຍໃນມື້ຂອງລະບົບ FXS ແມ່ນປະຕິບັດຕາມແຈ້ງການ ຫຼື ຄຳແນະນຳ ທີ່ ທຫລ ກຳນົດໃນແຕ່ລະໄລຍະ.

ຜູ້ໃຊ້ບໍລິການ ສາມາດກຳນົດອັດຕາແລກປ່ຽນໃນການສະເໜີຄຳສັ່ງຊື້ ຫຼື ຂາຍ ເງິນຕາຕ່າງປະເທດໃນລະບົບ FXS ພາຍໃນຂອບເຂດທີ່ໄດ້ກຳນົດໄວ້ໃນແຕ່ລະວັນ.

**ມາດຕາ 13 ການໂຈະການແລກປ່ຽນຊື້-ຂາຍຂອງຕະຫຼາດ**

ບໍລິສັດ ຕະຫຼາດແລກປ່ຽນເງິນຕາຕ່າງປະເທດລາວ ຈຳກັດ ມີສິດໂຈະການໃຫ້ບໍລິການຕະຫຼາດແລກປ່ຽນເງິນຕາຕ່າງປະເທດລາວ ແລະ ບໍ່ອະນຸຍາດໃຫ້ຜູ້ໃຊ້ລະບົບ FXS ໃນກໍລະນີດັ່ງຕໍ່ໄປນີ້:

1. ອັດຕາແລກປ່ຽນປະຈຳວັນ ມີການຜັນຜວນຢ່າງແຮງ ຫຼື ຄາດວ່າຈະເກີດການປ່ຽນແປງທີ່ບໍ່ປົກກະຕິ ເນື່ອງຈາກເຫດການພິເສດ ເຊັ່ນ: ເຫດການດ້ານການເງິນ, ການເມືອງ ຫຼື ໄພພິບັດ;

2. ກວດພົບວ່າຜູ້ໃຊ້ບໍລິການ ສະເໜີຊື້-ຂາຍໃນອັດຕາຜິດປົກກະຕິ ທີ່ມີລັກສະນະການປັ່ນຕະຫຼາດ (Market Manipulation) ແລະ ການກະທົບອັດຕາແລກປ່ຽນໂດຍບໍ່ມີເຫດຜົນທາງເສດຖະກິດ;

3. ຄຳສັ່ງ ຫຼື ແຈ້ງການ ຈາກຂັ້ນເທິງເພື່ອ ປົກປ້ອງຜົນປະໂຫຍດ ຂອງບໍລິສັດ ຕລຕ, ສະມາຊິກ, ຜູ້ໃຊ້ບໍລິການ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນລະບົບການເງິນ;

4. ບໍລິສັດ ຕລຕ ເຫັນວ່າມີຄວາມຈຳເປັນ ຕ້ອງໂຈະການບໍລິການຊົ່ວຄາວ ເພື່ອຮັກສາຄວາມປອດໄພຂອງລະບົບ ຫຼື ປ້ອງກັນຄວາມສ່ຽງທາງການເງິນ;

5. ລະບົບຄອມພິວເຕີມີບັນຫາທາງດ້ານເຕັກນິກ ເຊັ່ນ: ລະບົບຄອມພິວເຕີຂັດຂ້ອງ, ມີການໂຈມຕີດ້ານ Cybersecurity ແລະ ຄາດວ່າຈະເກີດບັນຫາທີ່ສົ່ງຜົນກະທົບຕໍ່ການເຮັດທຸລະກຳ.

**ມາດຕາ 14 ການຊື້-ຂາຍ ເງິນຕາຕ່າງປະເທດທີ່ບໍ່ຍຸຕິທຳ**

ການຊື້-ຂາຍເງິນຕາຕ່າງປະເທດ ທີ່ບໍ່ຍຸຕິທຳ ແມ່ນ ພຶດຕິກຳໃດໜຶ່ງຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ເຮັດໃຫ້ລາຄາ ແລະ/ຫຼື ປະລິມານເງິນຕາ ເໜັງຕີງຜິດປົກກະຕິຈາກຄວາມເປັນຈິງ ແລະ ສ້າງຜົນເສຍຫາຍໃຫ້ແກ່ຜູ້ອື່ນ.

ການຊື້-ຂາຍເງິນຕາທີ່ບໍ່ຍຸຕິທຳ ມີ ດັ່ງນີ້:

1. ການປັ່ນຕະຫຼາດ (Market Manipulation) ຫຼື ການສ້າງການເຄື່ອນໄຫວຂອງລາຄາເງິນຕາ ໂດຍໃສ່ຕົວເລກ ເພື່ອຫຼອກລວງຜູ້ຄຸ້ມຄອງ ຫຼື ຜູ້ໃຊ້ບໍລິການ, ຕົວຢ່າງ: ການສັ່ງຊື້-ຂາຍ ເງິນຕາຕ່າງປະເທດປອມ ເພື່ອເຮັດໃຫ້ເກີດຄວາມຄິດວ່າມີຄວາມຕ້ອງການສູງ. ການປັ່ນຕະຫຼາດ ສະແດງອອກໃນລັກສະນະໃດໜຶ່ງ ຫຼື ທັງໝົດ ດັ່ງນີ້:

   1.1. ສົ່ງຄຳສັ່ງຊື້ ຫຼື ຂາຍ ເຊິ່ງເຮັດໃຫ້ບຸກຄົນທົ່ວໄປ ເຂົ້າໃຈຜິດກ່ຽວກັບປະລິມານ ຫຼື ລາຄາການຊື້-ຂາຍເງິນຕາ;

   1.2. ສົ່ງຄຳສັ່ງຊື້ ຫຼື ຂາຍ ທີ່ມີລັກສະນະຕໍ່ເນື່ອງ ໂດຍມີເປົ້າໝາຍໃຫ້ ລາຄາ ຫຼື ປະລິມານການຊື້-ຂາຍ ເພີ່ມຂຶ້ນ ຫຼື ຫຼຸດລົງ ຜິດຈາກສະພາບປົກກະຕິຂອງຕະຫຼາດ LFX;

   1.3. ການຊື້-ຂາຍເງິນຕາ ເພື່ອຜົນປະໂຫຍດຂອງບຸກຄົນ ຫຼື ກຸ່ມຄົນດຽວກັນ;

   1.4. ສົ່ງຄຳສັ່ງຊື້-ຂາຍເງິນຕາ ໂດຍຮູ້ຢູ່ແລ້ວວ່າ ຕົນເອງ ຫຼື ບຸກຄົນ ທີ່ຮ່ວມກັນກະທຳ ໄດ້ສົ່ງຄຳສັ່ງຊື້-ຂາຍເງິນຕາດຽວກັນໃນ ຈຳນວນ, ລາຄາ ແລະ ເວລາ ໃກ້ຄຽງກັນ;

   1.5. ສົ່ງ, ແກ້ໄຂ ຫຼື ຍົກເລີກ ຄຳສັ່ງຊື້-ຂາຍເງິນຕາ ຫຼັງຈາກເປີດຕະຫຼາດ ຫຼື ກ່ອນການປິດຕະຫຼາດ ໂດຍມີຈຸດປະສົງເຮັດໃຫ້ ລາຄາເປີດ ຫຼື ປິດ ສູງ ຫຼື ຕ່ຳກວ່າ ລາຄາທີ່ຄວນຈະເປັນ;

   1.6. ສົ່ງ, ແກ້ໄຂ ຫຼື ຍົກເລີກ ຄຳສັ່ງຊື້-ຂາຍເງິນຕາ ໃນລັກສະນະທີ່ເປັນການຂັດຂວາງ ການຊື້-ຂາຍເງິນ ຂອງບຸກຄົນອື່ນ ເຊິ່ງມີຜົນເຮັດໃຫ້ບຸກຄົນອື່ນ ຕ້ອງສົ່ງຄຳສັ່ງຊື້-ຂາຍ ໃນລາຄາທີ່ສູງ ຫຼື ຕ່ຳ ກວ່າລາຄາທີ່ຄວນຈະເປັນຈິງ;

   1.7. ດຳເນີນດ້ວຍວິທີການອື່ນ ທີ່ກໍ່ໃຫ້ເກີດຄວາມເສຍຫາຍໃຫ້ແກ່ຜູ້ໃຊ້ບໍລິການ ແລະ ສ້າງຄວາມເສຍຫາຍຕໍ່ລະບົບຕະຫຼາດ LFX.

2. ການນຳໃຊ້ຂໍ້ມູນພາຍໃນເພື່ອຊື້-ຂາຍເງິນຕາຕ່າງປະເທດ (Insider Trading) ແມ່ນ ການນຳໃຊ້, ໃຫ້, ຮັບ, ສົ່ງຕໍ່, ເປີດເຜີຍ ຫຼື ເຜີຍແຜ່ຂໍ້ມູນ ທາງກົງ ຫຼື ທາງອ້ອມ ກ່ຽວກັບການຄຸ້ມຄອງເງິນຕາຕ່າງປະເທດ ທີ່ມີເນື້ອໃນສຳຄັນ ແລະ ຍັງບໍ່ທັນອະນຸຍາດໃຫ້ເປີດເຜີຍຕໍ່ມວນຊົນຢ່າງເປັນທາງການ ເພື່ອຜົນປະໂຫຍດຂອງຕົນ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ເຊິ່ງພາຍຫຼັງການເປີດເຜີຍ ຈະມີຜົນກະທົບຕໍ່ ການຊື້-ຂາຍເງິນຕາຕ່າງປະເທດ.

3. ການຍຸຍົງໃຫ້ຕັດສິນໃຈຊື້-ຂາຍເງິນຕາຕ່າງປະເທດ (Misleading Conduct) ແມ່ນການກະທຳຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ທີ່ເປັນການໂຆສະນາ, ນຳໃຊ້ເລ່ຫຼ່ຽມ, ກົນອຸບາຍ ຫຼື ຫຼອກ

ລວງ ເພື່ອເຮັດໃຫ້ບຸກຄົນອື່ນຫຼົງເຊື່ອ ແລ້ວຕັດສິນໃຈຊື້-ຂາຍເງິນຕາຕ່າງປະເທດ ເພື່ອຜົນປະໂຫຍດຂອງຕົນ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ເຊິ່ງໄດ້ສ້າງຄວາມອັບປະໂຫຍດໃຫ້ແກ່ຜູ້ທີ່ຖືກກະທຳດັ່ງກ່າວ.

4. ການສ້າງ, ສະໜອງ ຫຼື ເຜີຍແຜ່ຂໍ້ມູນກ່ຽວກັບອັດຕາແລກປ່ຽນທີ່ບໍ່ຖືກຕ້ອງ (False Information Dissemination) ຕາມຄວາມເປັນຈິງ ເພື່ອກະທົບຕະຫຼາດ ແມ່ນການກະທຳຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ທີ່ນຳເອົາຂໍ້ມູນກ່ຽວກັບການຊື້-ຂາຍຂາຍເງິນຕາຕ່າງປະເທດ, ອັດຕາແລກປ່ຽນ ທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ, ບໍ່ຄົບຖ້ວນ ຫຼື ຂາດການພິຈາລະນາຂໍ້ມູນຢ່າງເລິກເຊິ່ງ ມາວິເຄາະ ຫຼື ຄາດຄະເນກ່ຽວກັບການຊື້-ຂາຍເງິນຕາຕ່າງປະເທດ, ອັດຕາແລກປ່ຽນ ເຊິ່ງເຮັດໃຫ້ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ເຂົ້າໃຈຜິດ ຫຼື ຫຼົງເຊື່ອ ຕໍ່ຂໍ້ມູນດັ່ງກ່າວ ແລ້ວນຳໃຊ້ຂໍ້ມູນນັ້ນ ເປັນບ່ອນອີງໃນການຕັດສິນໃຈຊື້-ຂາຍເງິນຕາຕ່າງປະເທດ ແລະ ໄດ້ຮັບຄວາມເສຍຫາຍ.

### ມາດຕາ 15 ຄ່າທຳນຽມໃນການແລກປ່ຽນຊື້-ຂາຍ ເງິນຕາຕ່າງປະເທດ

ບໍລິສັດ ຕລຕ ປະຕິບັດຄ່າທຳນຽມໃນການແລກປ່ຽນຊື້-ຂາຍ ເງິນຕາຕ່າງປະເທດ ຕາມການອະນຸຍາດຂອງ ທະນາຄານແຫ່ງ ສປປ ລາວ ແລະ ປະຕິບັດອັດອັດຕາແລກປ່ຽນຕາມຕາມລະບຽບ ທີ່ ທະນາຄານແຫ່ງ ສປປ ລາວ ໄດ້ວາງອອກ.

## ໝວດທີ 3
## ຂັ້ນຕອນການກວດກາ, ປະສານງານ ແລະ ສົ່ງເງິນຄືນລູກຄ້າ

### ມາດຕາ 16 ຊ່ອງທາງໃນການຮັບແຈ້ງບັນຫາຈາກລູກຄ້າ

ບໍລິສັດ ຕະຫຼາດແລກປ່ຽນເງິນຕາຕ່າງປະເທດລາວ ຈຳກັດ ມີຊ່ອງທາງໃນການຮັບຂໍ້ມູນ ຄື:

1. ການເຂົ້າມາພົວພັນໂດຍກົງກັບພະນັກງານບໍລິສັດ ຕລຕ;
2. ຜ່ານຊ່ອງທາງອອນລາຍ ເປັນຕົ້ນແມ່ນ Facebook page, ເວບໄຊ, E-mail ຫຼື ຜ່ານທາງ WhatApps ຂອງ ບໍລິສັດ ຕລຕ;
3. ຜ່ານຊ່ອງທາງທະນາຄານທຸລະກິດທີ່ລູກຄ້າໃຊ້ບໍລິການ Mobile Banking/Internet Banking;
4. ຜ່ານທາງ ລະບົບແກ້ໄຂທຸລະກຳຜິດພາດ (DRS).

ອາຍຸການຂອງທຸລະກຳຕົ້ນສະບັບ (Original transaction) ທີ່ສາມາດດຳເນີນການແກ້ໄຂໄດ້ແມ່ນບໍ່ເກີນ 180 ວັນ ນັບຈາກວັນທີ່ເກີດທຸລະກຳ, ຖ້າກໍລະນີເກີນກຳນົດ ບໍລິສັດ ຕລຕ ຈະບໍ່ຮັບຜິດຊອບຄ່າເສຍຫາຍໃດໆທີ່ເກີດຂຶ້ນ.

### ມາດຕາ 17 ຂະບວນການແກ້ໄຂທຸລະກຳຜິດພາດ

1. ຂັ້ນຕອນການຮັບແຈ້ງ ແລະ ກວດກາບັນຫາ
   - ການແຈ້ງເຫດ: ລູກຄ້າຕ້ອງແຈ້ງບັນຫາ ຜ່ານຊ່ອງທາງທີ່ກຳນົດໄວ້ໃນ ມາດຕາ 16.
   - ການຢັ້ງຢືນຂໍ້ມູນ: ຜູ້ໃຫ້ບໍລິການຕ້ອງກວດສອບຄວາມຖືກຕ້ອງຂອງຂໍ້ມູນ ເຊັ່ນ: ລາຍລະອຽດທຸລະກຳ, USER ID, ເວລາເກີດເຫດ.

2. ຂັ້ນຕອນການປະສານງານ ແລະ ແກ້ໄຂ

- ການຈັດປະເພດບັນຫາດ້ານເຕັກນິກ ເຊັ່ນ: ❶ລະບົບລົ້ມເຫຼວ/ເຂົ້າສູ່ລະບົບບໍ່ໄດ້. ❷ບັນຫາດ້ານຄວາມປອດໄພ ເຊັ່ນ: ການນຳໃຊ້ບໍລິການໂດຍບໍ່ໄດ້ຮັບອະນຸຍາດ. ❸ຂໍ້ຂັດຂ້ອງດ້ານທຸລະກຳ ເຊັ່ນ: ເງິນບໍ່ເຂົ້າບັນຊີ, ອັດຕາແລກປ່ຽນບໍ່ຖືກຕ້ອງ.
- ເວລາແກ້ໄຂບັນຫາມີ 2 ກໍລະນີຄື: ❶ບັນຫາງພື້ນຖານ: ແກ້ໄຂພາຍໃນ 24–48 ຊົ່ວໂມງ (1-2 ວັນລັດຖະການ). ❷ບັນຫາສັບຊ້ອນ ອາດໃຊ້ເວລາ 3–7 ວັນລັດຖະການ ຫຼື ຫຼາຍກວ່ານັ້ນ (ຂຶ້ນກັບລະດັບຄວາມຍາກ-ງ່າຍຂອງບັນຫາ).

3. ບໍລິສັດ ຕລຕ ຈະແຈ້ງຜົນການແກ້ໄຂໃຫ້ລູກຄ້າຜ່ານ ໂທລະສັບ, E-mail ຫຼື WhatApps ແລະ ອາດມີການສຳພາດຄວາມເພິ່ງພໍໃຈຫຼັງຈາກແກ້ໄຂບັນຫາ.

4. ກໍລະນີທີ່ບັນຫາບໍ່ສາມາດແກ້ໄຂໄດ້ທັນທີ ຍ້ອນຂໍ້ຜິດພາດຈາກລະບົບ ຫຼື ມີການລະເມີດຄວາມປອດໄພ ອາດຈະໄດ້ມີການທົບທວນບັນຫາກັບແຕ່ລະພາກສ່ວນທີ່ກ່ຽວຂ້ອງ ແລະ ພິຈາລະນາຄືນຕາມຂັ້ນຕອນ ແລະ ລະບຽບການ.

## ມາດຕາ 18 ຂັ້ນຕອນການສົ່ງເງິນຄືນລູກຄ້າ

ການສົ່ງເງິນຄືນໃຫ້ແກ່ລູກຄ້າ ແມ່ນປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ເງື່ອນໄຂການສົ່ງເງິນຄືນຖ້າເກີດຄວາມຜິດພາດຈາກຜູ້ໃຫ້ບໍລິການ ເຊັ່ນ ❶ເງິນບໍ່ເຂົ້າບັນຊີ, ❷ຈຳນວນເງິນຜິດ, ❸ ອັດຕາແລກປ່ຽນບໍ່ຖືກຕ້ອງ, ❹ລູກຄ້າຍົກເລີກທຸລະກຳ ຕ້ອງມີການແຈ້ງບັນຫາພາຍໃນເວລາທີ່ກຳນົດ (ຕາມສັນຍາ ຫຼື ລະບຽບ) ແລະ ❹ການໂອນເງິນໂດຍບໍ່ມີການອະນຸຍາດ.

2. ຂັ້ນຕອນສົ່ງເງິນຄືນ

+ **ຂັ້ນຕອນທີ 1:** ການແຈ້ງເຫດ ແລະ ກວດສອບ

- ລູກຄ້າຕ້ອງ ແຈ້ງບັນຫາ/ຂໍ້ຜິດພາດ ຜ່ານຊ່ອງທາງທີ່ກຳນົດໃຫ້ ມາດຕາ 16 ຂອງລະບຽບສະບັບນີ້;
- ຜູ້ໃຫ້ບໍລິການ ກວດສອບຂໍ້ມູນ ເຊັ່ນ: ລາຍລະອຽດທຸລະກຳ (ເວລາ, ຈຳນວນເງິນ, ບັນຊີເປົ້າໝາຍ) ແລະ ກວດສອບຫຼັກຖານການໂອນ (ຮູບພາບຢັ້ງຢືນ, SMS ຢືນຢັນຈາກລະບົບ ແລະ ຂໍ້ມູນທີ່ບັນທຶກໃນລະບົບທີ່ກ່ຽວຂ້ອງ).

+ **ຂັ້ນຕອນທີ 2:** ການຢັ້ງຢືນ ແລະ ອະນຸມັດ

- ຜູ້ໃຫ້ບໍລິການ ຕິດຕໍ່ກັບທະນາຄານ ຫຼື ພາກສ່ວນທີ່ກ່ຽວຂ້ອງ ເພື່ອຢັ້ງຢືນຄວາມຖືກຕ້ອງ;
- ຖ້າຢັ້ງຢືນວ່າຜິດພາດຈາກຜູ້ໃຫ້ບໍລິການ, ຈະຕ້ອງດຳເນີນການສົ່ງເງິນຄືນ ພາຍໃນ 24–48 ຊົ່ວໂມງ (1-2 ວັນລັດຖະການ) ແລະ ຖ້າເກີນຕ້ອງໄດ້ແຈ້ງເຫດຜົນໃຫ້ລູກຄ້າ.

+ **ຂັ້ນຕອນທີ 3:** ດຳເນີນການສົ່ງເງິນຄືນ ❶ຜ່ານ ທາງບັນຊີທະນາຄານ (ໂອນກັບບັນຊີເດີມ) ຫຼື ❷ຜ່ານ ທາງກະເປົາເງິນດິຈິຕອນ (wallet). ໄລຍະເວລາໃນການຮັບເງິນຄືນ ຂຶ້ນກັບທະນາຄານເປົ້າໝາຍ (ປົກກະຕິ 1–3 ວັນລັດຖະການ).

+ **ຂັ້ນຕອນທີ 4:** ການແຈ້ງຜົນ ແລະ ຕິດຕາມ

- ຜູ້ໃຫ້ບໍລິການຕ້ອງ ແຈ້ງຜົນການສົ່ງເງິນຄືນ ໃຫ້ລູກຄ້າຜ່ານ ໂທລະສັບ, ອີເມວ ຫຼື WhatApps;
- ລູກຄ້າສາມາດຕິດຕາມສະຖານະ ຜ່ານແອັບ ຫຼື ໂທຫາຜູ້ໃຫ້ບໍລິການ.

## ພາກທີ 4
## ສິດ ແລະ ໜ້າທີ່ຂອງພາກສ່ວນທີ່ກ່ຽວຂ້ອງ

**ມາດຕາ 19 ສິດ ແລະ ໜ້າທີ່ຂອງ ບໍລິສັດ ຕລຕ**

ບໍລິສັດ ຕລຕ ມີສິດ ແລະ ໜ້າທີ່ໃນການໃຫ້ບໍລິການ, ຄຸ້ມຄອງການດຳເນີນງານຂອງລະບົບຕ່າງໆ ທີ່ຢູ່ໃນຄວາມຮອບຂອງຕົນ ແລະ ພັດທະນາຜະລິດຕະພັນໃນຕະຫຼາດແລກປ່ຽນເງິນຕາຕ່າງປະເທດ ຕາມລະບຽບກົດໝາຍກ່ຽວຂ້ອງ ແລະ ລະບຽບການທີ່ ທຫລ ກຳນົດ ແຕ່ລະໄລຍະ ດັ່ງນີ້:

1. ພັດທະນາ ແລະ ຈັດການລະບົບແລກປ່ຽນເງິນຕາໂດຍນຳໃຊ້ເຕັກໂນໂລຊີທີ່ທັນສະໄໝ ແລະ ປອດໄພສຳລັບຜູ້ໃຊ້ບໍລິການ ພ້ອມທັງໃຫ້ບໍລິການຕາມຂອບເຂດທີ່ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງກຳນົດ;

2. ດຳເນີນທຸລະກຳ ແລະ ຄຸ້ມຄອງລະບົບແລກປ່ຽນເງິນຕາ ເພື່ອຮັບປະກັນການເຄື່ອນໄຫວຊື້-ຂາຍທີ່ເປີດເຜີຍ ແລະ ຍຸຕິທຳ, ໂປ່ງໃສ ແລະ ຄວາມສະເໝີພາບໃນຕະຫຼາດ, ປະຕິບັດລະບອບລາຍງານ ແລະ ການກວດສອບ ຢ່າງຖືກຕ້ອງຕາມກົດໝາຍ, ສະໜອງຂໍ້ມູນ ແລະ ປະສານສົມທົບກັບພາກສ່ວນກ່ຽວຂ້ອງໃນການກວດກາ ຖ້າມີຄວາມຜິດພາດເກີດຂຶ້ນ ເປັນຕົ້ນແມ່ນ:
   - ຕິດຕາມ ແລະ ວິເຄາະຕະຫຼາດການຊື້-ຂາຍເງິນຕາຕ່າງປະເທດ ຢ່າງເປັນປົກກະຕິ;
   - ປ້ອນຂອບອັດຕາແລກປ່ຽນກ່ອນເປີດຕະຫຼາດປະຈຳວັນກ່ອນເລີ່ມດຳເນີນການແລກປ່ຽນ;
   - ກຳນົດມື້ເປີດ-ປິດດຳເນີນການຕະຫຼາດ, ຈັດຕາຕະລາງວັນພັກຕາມລະບຽບການ;
   - ກຳນົດຄ່າທຳນຽມໃນການຊື້-ຂາຍ ຫຼື ຕັ້ງອັດຕາຄ່າທຳນຽມສຳລັບທຸກທຸລະກຳທີ່ເກີດຂຶ້ນໃນຕະຫຼາດ;
   - ກຳນົດມູນຄ່າວົງເງິນຕໍ່າສຸດ-ສູງສຸດໃນການຊື້-ຂາຍ ທີ່ສາມາດຊື້-ຂາຍໄດ້ໃນແຕ່ລະຄຳສັ່ງ.

3. ການຈັດສັນຜົນປະໂຫຍດ ແລະ ຄ່າທຳນຽມ
   - ຄິດໄລ່ ແລະ ສະເໜີຂາຍ ຄ່າທຳນຽມເປັນເງິນຕາຕ່າງປະເທດທີ່ໄດ້ຈາກການແລກປ່ຽນໃນລະບົບ FXS ໃຫ້ ທຫລ;
   - ແບ່ງປັນຄ່າທຳນຽມໃຫ້ສະມາຊິກ ຫຼື ຈັດສັນຜົນປະໂຫຍດຕາມສັນຍາລະຫວ່າງ ບໍລິສັດ ຕລຕ ກັບ ທະນາຄານສະມາຊິກ ແລະ ບໍລິສັດທີ່ມີສ່ວນຮ່ວມ.

4. ການຄວບຄຸມ ແລະ ກວດສອບທຸລະກຳ
   - ສິດໃນການເຂົ້າເຖິງ, ເກັບກຳຂໍ້ມູນທຸລະກຳທັງໝົດທີ່ເກີດຂຶ້ນໃນລະບົບ FXS;
   - ຕິດຕາມ ແລະ ກວດກາຄວາມຖືກຕ້ອງຂອງທຸກທຸລະກຳການເຄື່ອນໄຫວພາຍໃນຕະຫຼາດ;
   - ຕິດຕາມ, ກວດກາ ແລະ ແກ້ໄຂທຸລະກຳຜິດພາດ;
   - ມີອຳນາດໃນການຢຸດ, ປັບປຸງ ຫຼື ຍົກເລີກທຸລະກຳທີ່ຜິດກົດໝາຍ ຫຼື ລະບຽບການ.

5. ການຕັ້ງຄ່າລະບົບ ແລະ ອັດຕາແລກປ່ຽນ

- ຕັ້ງຄ່າອັດຕາແລກປ່ຽນປະຈຳວັນ (Set Daily Rate) ກຳນົດອັດຕາກາງ (ອີງຕາມຕະຫຼາດ), ອັດຕາຕ່ຳສຸດ ແລະ ສູງສຸດ ຂອງແຕ່ລະສະກຸນເງິນ ເຊິ່ງຄ່າເຫຼົ່ານີ້ຈະຖືກນຳໃຊ້ເຂົ້າໃນການຊື້-ຂາຍພາຍໃນລະບົບ FXS;
- ປ້ອນອັດຕາຄ່າທຳນຽມແລກປ່ຽນ (Fee Exchange) ກຳນົດອັດຕາແລກປ່ຽນເພື່ອແລກປ່ຽນ ຄ່າທຳນຽມ ຈາກເງິນໂດລາ, ບາດ ແລະ ຢວນ ເປັນ ເງິນກີບ ເພື່ອເປັນຂໍ້ມູນໃນການຊຳລະສະສາງ;
- ສະໜອງຂໍ້ມູນໃຫ້ພາກສ່ວນກ່ຽວຂ້ອງ ເປັນຕົ້ນແຈ້ງຂໍ້ມູນການເຄື່ອນໄຫວຕະຫຼາດໃຫ້ຜູ້ຄຸ້ມຄອງ, ທະນາຄານທຸລະກິດ, ສະມາຊິກຂອງລະບົບ FXS ຫຼື ອົງການທີ່ມີສິດອຳນາດຕາມການສະເໜີ ໃນແຕ່ລະໄລຍະ;

6. ຖືບັນຊີ, ລາຍງານ, ເປີດເຜີຍ ແລະ ເກັບຮັກສາຂໍ້ມູນ ຕາມລະບຽບການທີ່ ທຫລ ກຳນົດ ແຕ່ໄລຍະ;

7. ໃຫ້ຄວາມຮ່ວມມື ແລະ ປະຕິບັດຕາມກົນໄກ ການຄຸ້ມຄອງ ແລະ ການກວດກາ ຕາມລະບຽບການທີ່ ທຫລ ກຳນົດ ແຕ່ລະໄລຍະ;

8. ດຳເນີນການກ່າວເຕືອນ, ໂຈະຊົ່ວຄາວ ຫຼື ປິດຖາວອນ ບັນຊີຜູ້ໃຊ້ ທີ່ ສົງໃສວ່າມີຄວາມສ່ຽງຕໍ່ການດຳເນີນການ ຂອງ ຕະຫຼາດແລກປ່ຽນເງິນຕາຕ່າງປະເທດລາວ ຫຼື ລະເມີດຕໍ່ລະບຽບການສະບັບນີ້;

9. ລາຍງານ, ສະໜອງຂໍ້ມູນ ໃຫ້ເຈົ້າໜ້າທີ່ຕຳຫຼວດ ຫຼື ພາກສ່ວນກ່ຽວຂ້ອງ;

10. ໂຄສະນາ ແລະ ເຜີຍແຜ່ຂໍ້ມູນຂ່າວສານກ່ຽວກັບການດຳນີນການຕະຫຼາດຕາມນະໂຍບາຍຂອງຂັ້ນເທິງ, ນຳໃຊ້ຊ່ອງທາງສື່ອອນລາຍເພື່ອເຜີຍແຜ່ຂໍ້ມູນທີ່ຈຳເປັນ ເປັນຕົ້ນ ຂໍ້ມູນກ່ຽວກັບຄ່າທຳນຽມ ແລະ ເງື່ອນໄຂການໃຊ້ບໍລິການໃນແຕ່ລະໄລຍະ;

11. ໃຫ້ການບໍລິການລູກຄ້າ, ດຳເນີນການແກ້ໄຂບັນຫາ ແລະ ຄຳຮ້ອງທຸກຂອງລູກຄ້າຢ່າງໄວທີ່ສຸດ ພ້ອມທັງເກັບຮັກສາຂໍ້ມູນທຸລະກຳຂອງຜູ້ໃຊ້ ຢ່າງໜ້ອຍ 10 ປີ ຕາມກົດໝາຍ, ສະໜອງການບໍລິການລູກຄ້າ ແລະ ໃຫ້ຄຳແນະນຳຜ່ານຫຼາຍຊ່ອງທາງ (ເອກະສານ, ອີເມວ, ໂທລະສັບ ແລະ ທາງສື່ສັງຄົມອອນໄລຕາມຄວາມເໝາະສົມ);

12. ຄຸ້ມຄອງຄວາມປອດໄພ ແລະ ປົກປ້ອງຂໍ້ມູນ ໂດຍການສ້າງລະບຽບການຄວບຄຸມພາຍໃນ ແລະ ບໍລິຫານຄວາມສ່ຽງເພື່ອຮັບປະກັນການດຳເນີນງານທີ່ມີປະສິດທິຜົນ, ຮັບປະກັນຄວາມປອດໄພ ຂອງ USER ID, ຫ້າມເຜີຍແຜ່ ຫຼື ນຳໃຊ້ USER ID ໂດຍບໍ່ໄດ້ຮັບການອະນຸຍາດ;

13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ຮັບການມອບໝາຍຈາກຂັ້ນເທິງ.

**ມາດຕາ 20 ສິດ ແລະ ໜ້າທີ່ຂອງຜູ້ມີສ່ວນຮ່ວມໃນຕະຫຼາດ**

ຜູ້ມີສ່ວນຮ່ວມ ປະກອບມີ ດັ່ງນີ້:

1. ຜູ້ໃຊ້ບໍລິການ (End User) ທີ່ມີເງື່ອນໄຂຄົບຖ້ວນ ແລະ ສະໝັກໃຈເຂົ້າໃຊ້ບໍລິການຂອງ ຕະຫຼາດແລກປ່ຽນເງິນຕາຕ່າງປະເທດລາວ ໂດຍມີການຄຳນຶງເຖິງຄວາມສ່ຽງໃນການແລກປ່ຽນເງິນຕາຕ່າງປະເທດ ເຊິ່ງຜູ້ໃຊ້ບໍລິການບໍ່ແມ່ນສະມາຊິກຕະຫຼາດ;

2. ສະມາຊິກ ແມ່ນ ທະນາຄານທຸລະກິດ ຜູ້ທີ່ມີເງື່ອນໄຂຄົບຖ້ວນ ແລະ ສະໝັກເຂົ້າເປັນຜູ້ຮ່ວມໃຫ້ບໍລິການ ຫຼື ເປັນສະມາຊິກໃນລະບົບ FXS, ເປັນຜູ້ອຳນວຍຄວາມສະດວກໃຫ້ແກ່ລູກຄ້າຂອງຕົນໃນການເປີດ

ບັນຊີເງິນຝາກ, ໂອນເງິນ ຫຼື ຊໍາລະເງິນ. ສະເພາະທະນາຄານທຸລະກິດ ທີ່ເປັນສະມາຊິກໃນລະບົບ FXS ເປັນຜູ້ອໍານວຍຄວາມສະດວກໃນການຝາກ-ຖອນເງິນ ໃນບັນຊີກະເປົາ (Wallet) ຂອງລະບົບ ແລະ ບັນຊີລູກຄ້າທີ່ຈະເຂົ້າໃຊ້ບໍລິການແລກປ່ຽນເງິນຕາຕ່າງປະເທດ ຜ່ານລະບົບ FXS ດ້ວຍການເຊື່ອມຕໍ່ໃນລະບົບຕະຫຼາດ ແລະ ລະບົບຂອງທະນາຄານທຸລະກິດ;

3. ທຫລ ເປັນຜູ້ດໍາເນີນການຊໍາລະສະສາງ ລະຫວ່າງ ທະນາຄານທຸລະກິດ;

4. ບໍລິສັດ ລາວເນເຊີນນໍ ເພເມັ້ນ ເນັດເວີກ ຈໍາກັດ (LAPNet) ຈະມີສ່ວນຮ່ວມໃນການເປັນຜູ້ສະໜອງລະບົບສື່ກາງໃນການເຊື່ອມຕໍ່-ສົ່ງຂໍ້ມູນຫາກັນລະຫວ່າງສາມລະບົບຄື: ທະນາຄານແຫ່ງ ສປປ ລາວ, ທະນາຄານທຸລະກິດ ແລະ ຕະຫຼາດແລກປ່ຽນເງິນຕາຕ່າງປະເທດລາວ;

5. ຜູ້ມີສ່ວນຮ່ວມອື່ນ ຕາມການກໍານົດຂອງທະນາຄານແຫ່ງ ສປປ ລາວ ໃນແຕ່ລະໄລຍະ.

**ມາດຕາ 21 ສິດ ແລະ ໜ້າທີ່ຂອງຜູ້ໃຊ້ບໍລິການ**

ຜູ້ໃຊ້ບໍລິການລະບົບ FXS ມີສິດໃນການໃຊ້ບໍລິການຕາມເງື່ອນໄຂທີ່ກໍານົດໄວ້, ໃນຂະນະດຽວກັນກໍ່ມີໜ້າທີ່ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ ບໍລິສັດ ຕລຕ ກໍານົດໄວ້ດັ່ງລຸ່ມນີ້:

1. ໃຊ້ບໍລິການຢ່າງຖືກຕ້ອງ ດ້ວຍຄວາມສະໝັກໃຈ ແລະ ມີຄວາມຮັບຜິດຊອບ;

2. ຕ້ອງມີຄວາມສາມາດທາງດ້ານການເງິນ ແລະ ປະຕິບັດຕາມເງື່ອນໄຂຂອງຜູ້ໃຫ້ບໍລິການ;

3. ມີບັນຊີເງິນກີບ ແລະ ສະກຸນເງິນທີ່ຕ້ອງການຊື້ ຫຼື ຂາຍ;

4. ດໍາເນີນທຸລະກໍາໃນຂອບເຂດທີ່ກໍານົດ, ປະຕິບັດຕາມວົງເງິນ, ຂອບອັດຕາແລກປ່ຽນ ແລະ ລະບຽບການທີ່ກ່ຽວຂ້ອງ;

5. ການຮັບຜິດຊອບຕໍ່ຂໍ້ມູນ ແລະ ລົງທະບຽນດ້ວຍຂໍ້ມູນທີ່ຊັດເຈນ ແລະ ຖືກຕ້ອງຕາມຄວາມເປັນຈິງ, ສາມາດຮັບຮູ້ຄວາມສ່ຽງ ແລະ ຜົນກະທົບຈາກການເຮັດທຸລະກໍາ, ຕ້ອງມີຄວາມເຂົ້າໃຈກ່ຽວກັບຜົນກະທົບທາງບວກ ແລະ ລົບຂອງການດໍາເນີນທຸລະກໍາ ຫຼື ແລກປ່ຽນເງິນຕາເປັນຢ່າງດີ;

6. ໄດ້ຮັບຂໍ້ມູນ ຫຼື ສາມາດເຂົ້າເຖິງຂໍ້ມູນຜ່ານສື່ອອນລາຍ, ສູນບໍລິການ ຫຼື ໂທລະສັບ (Call Center) ຕະຫຼອດເຖິງໄດ້ຮັບການປົກປ້ອງຈາກຜູ້ໃຫ້ບໍລິການ ໃນການປົກປິດ USER ID ແລະ ຂໍ້ມູນສ່ວນຕົວ ຫຼື ຂໍ້ມູນການເຂົ້າລະບົບກັບຜູ້ອື່ນ;

7. ເປັນເຈົ້າການໃນການຮັກສາຂໍ້ມູນລັບ, ລະຫັດຄວາມປອດໄພຂອງຕົນຕາມມາດຕະຖານ ແລະ ລະບຽບການຂອງຜູ້ໃຫ້ບໍລິການ;

8. ການຮັບປະກັນສິດທິໃນການຊ່ວຍເຫຼືອ ແລະ ການປົກປ້ອງຕາມກົດໝາຍ, ສາມາດຮ້ອງທຸກຖ້າຜູ້ໃຫ້ບໍລິການບໍ່ປະຕິບັດຕາມເງື່ອນໄຂ ຫຼື ເຮັດໃຫ້ເກີດຄວາມເສຍຫາຍ.

**ມາດຕາ 22 ສິດ ແລະ ໜ້າທີ່ຂອງສະມາຊິກ**

ສະມາຊິກລະບົບ FXS ມີສິດໃນການໃຊ້ບໍລິການ ແລະ ມີໜ້າທີ່ໃນການປະຕິບັດຕາມກົດໝາຍ, ຮັບປະກັນຄວາມປອດໄພ ແລະ ປະສິດທິພາບຂອງທຸລະກໍາ ດັ່ງລຸ່ມນີ້:

1. ຕ້ອງປະຕິບັດຕາມກົດໝາຍ, ລະບຽບການຄຸ້ມຄອງ ແລະ ເງື່ອນໄຂການໃຊ້ບໍລິການຂອງ LFX ຢ່າງເຂັ້ມງວດ;

2. ອໍານວຍຄວາມສະດວກໃຫ້ລູກຄ້າໃນການເຮັດທຸລະກໍາ ເພື່ອຊ່ວຍໃຫ້ລູກຄ້າສາມາດເຮັດທຸລະກໍາແລກປ່ຽນເງິນຕາໄດ້ຢ່າງສະດວກ ແລະ ຖືກຕ້ອງຕາມກົດໝາຍ;

3. ຮັບປະກັນການເຊື່ອມໂຍງລະບົບຂອງຕົນ ກັບ ບໍລິສັດ ຕລຕ ແລະ ບໍລິສັດ ລາວເນເຊີນນໍ ເພ ເມັ້ນ ເນັດເວີກ ຈຳກັດ (LAPNet) ເພື່ອຮັບປະກັນການດຳເນີນທຸລະກຳຂອງລູກຄ້າດຳເນີນໄປຢ່າງມີປະສິດທິພາບ ແລະ ຄ່ອງຕົວ;

4. ມີລະບຽບການຄຸ້ມຄອງຄວາມປອດໄພຂອງຂໍ້ມູນ ແລະ ທຸລະກຳ ຮັບປະກັນຄວາມເປັນເອກະພາບຂອງການໃຊ້ບໍລິການ ແລະ ໃຫ້ບໍລິການດ້ວຍຄຸນນະພາບສູງ ຕາມມາດຕະຖານທີ່ກຳນົດ;

5. ສົ່ງເສີມວຽກງານການຕະຫຼາດ ແລະ ໂຄສະນາເຜີຍແຜ່ຂໍ້ມູນຂ່າວສານ ກ່ຽວກັບ LFX ໃຫ້ລູກຄ້າ ແລະ ມວນຊົນ ຮັບຮູ້ເປັນວົງກວ້າງ;

6. ປະຕິບັດຕາມມາດຕະການຄວບຄຸມຄວາມສ່ຽງ, ຮັບປະກັນຄວາມປອດໄພ ແລະ ຄຸນນະພາບ.

**ມາດຕາ 23 ສິດ ແລະ ໜ້າທີ່ຂອງບໍລິສັດ LAPNet**

ບໍລິສັດ LAPNet ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ສະໜອງ ພື້ນຖານໂຄງລ່າງດ້ານເຕັກໂນໂລຊີທີ່ຊ່ວຍໃຫ້ສາມາດເຊື່ອມຕໍ່ ລະຫວ່າງ ຕະຫຼາດແລກປ່ຽນເງິນຕາຕ່າງປະເທດລາວ, ທະນາຄານທຸລະກິດ ແລະ ທຫລ;

2. ຮັບປະກັນ ການຝາກ-ຖອນເງິນ ແລະ ການຊຳລະສະສາງລະຫ່ວາງທະນາຄານ;

3. ອຳນວຍຄວາມສະດວກໃນການແລກປ່ຽນຂໍ້ມູນ ແລະ ຂ່າວສານ ລະຫວ່າງ ບໍລິສັດ ຕລຕ, ທະນາຄານທຸລະກິດ ແລະ ທຫລ ທີ່ປອດໄພ ແລະ ປະສິດທິພາບ;

4. ຮັບປະກັນຄວາມໜ້າເຊື່ອຖື ແລະ ເວລາການເຮັດວຽກຂອງ ພື້ນຖານໂຄງລ່າງເຕັກໂນໂລຊີ ທີ່ເຊື່ອມຕໍ່ ລະຫວ່າງ ບໍລິສັດ ຕລຕ, ທະນາຄານທຸລະກິດ ແລະ ທຫລ.

**ມາດຕາ 24 ສິດ ແລະ ໜ້າທີ່ຂອງຜູ້ພັດທະນາລະບົບ**

ຜູ້ພັດທະນາລະບົບ FXS ມີສິດ ແລະ ໜ້າທີ່ໃນການສ້າງ, ບຳລຸງຮັກສາ ແລະ ປັບປຸງລະບົບໃຫ້ມີປະສິດທິພາບ ແລະ ປອດໄພ, ພ້ອມທັງປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ດັ່ງລຸ່ມນີ້:

1. ຕ້ອງມີສັນຍາທີ່ຊັດເຈນກ່ຽວກັບການພັດທະນາ, ບຳລຸງຮັກສາ ແລະ ປັບປຸງລະບົບ ຕາມວິທີການທີ່ກຳນົດໄວ້. ຕ້ອງລາຍງານ ແລະ ແຈ້ງບັນຫາທາງເຕັກນິກ ເປັນຕົ້ນການເປີດໃຊ້ງານລະບົບ, ການອັບເດດ ຫຼື ບັນຫາທີ່ເກີດຂຶ້ນ ພ້ອມທັງສາເຫດຂອງບັນຫາໃຫ້ ບໍລິສັດ ຕລຕ ຮັບຮູ້ຢ່າງທັນການ;

2. ຕ້ອງອອກແບບ ແລະ ພັດທະນາລະບົບໃຫ້ມີປະສິດທິພາບ ສາມາດຮອງຮັບທຸລະກຳຈຳນວນຫຼາຍ ແລະ ມີລະບົບຄວາມປອດໄພທີ່ເໝາະສົມ, ມີການປັບປຸງ ແລະ ບຳລຸງຮັກສາລະບົບຢ່າງສະໝ່ຳສະ ເໝີ ພ້ອມນັ້ນຕ້ອງມີການປັບປຸງລະບົບເປັນປົກກະຕິ ເພື່ອຮັບມືກັບຄວາມຕ້ອງການໃໝ່ ແລະ ຊ່ວຍຫຼຸດຜ່ອນຄວາມສ່ຽງດ້ານຄວາມປອດໄພ;

4. ຮັບປະກັນຄວາມປອດໄພຂອງຂໍ້ມູນຜູ້ໃຊ້ ຢ່າງໜ້ອຍຈະຕ້ອງມີມາດຕະການເຂົ້າລະຫັດຂໍ້ມູນ (Encryption) ແລະ ລະບົບການຢັ້ງຢືນຕົວຕົນ (Authentication) ທີ່ເໝາະສົມ;

5. ປະຕິບັດຕາມກົດໝາຍກ່ຽວກັບການຄຸ້ມຄອງຂໍ້ມູນ ແລະ ຄວາມປອດໄພດິຈິຕອນ ຂອງ ສປປ ລາວ ແລະ ມາດຕະຖານສາກົນກ່ຽວກັບຄວາມປອດໄພດິຈິຕອນ;

6. ການສື່ສານ ແລະ ປະສານງານກັບທີມງານ ບໍລິສັດ ຕລຕ ແລະ ພາກສ່ວນທີ່ກ່ຽວຂ້ອງຢ່າງເປັນປົກກະຕິ ເພື່ອແກ້ໄຂບັນຫາໄດ້ຢ່າງວ່ອງໄວ;

7. ສະໜອງການຝຶກອົບຮົມ, ສະໜັບສະໜູນໃນການນຳໃຊ້ລະບົບ ແລະ ແກ້ໄຂບັນຫາທາງເຕັກນິກໃຫ້ກັບບໍລິສັດ ຕລຕ, ບໍລິສັດທີ່ມີສ່ວນຮ່ວມ, ສະມາຊິກ ແລະ ພາກສ່ວນທີ່ກ່ຽວຂ້ອງ.

## ໝວດທີ 5
## ການສະໝັກສະມາຊິກ, ການຊຳລະ ແລະ ແບ່ງປັນຄ່າທຳນຽມ

### ມາດຕາ 25 ເງື່ອນໄຂ ແລະ ຂັ້ນຕອນ ການສະໝັກສະມາຊິກ

ຜູ້ທີ່ຕ້ອງການສະໝັກເປັນ ສະມາຊິກ ຂອງ ຕະຫຼາດແລກປ່ຽນເງິນຕາຕ່າງປະເທດລາວ ຕ້ອງມີເງື່ອນໄຂພື້ນຖານ ດັ່ງນີ້:

1. ເປັນທະນາຄານທຸລະກິດທີ່ເຄື່ອນໄຫວສອດຄ່ອງຕາມ ລະບຽບກົດໝາຍຂອງ ສປປ ລາວ;
2. ມີສະຖານະທາງການເປັນນິຕິບຸກຄົນທີ່ຖືກຕ້ອງຕາມກົດໝາຍ;
3. ມີລະບົບເຕັກໂນໂລຊີທີ່ສະໜັບສະໜູນ ເຊັ່ນ: ແອັບພລິເຄຊັນໃນມືຖື (Mobile Application) ແລະ ລະບົບ Internet Banking ເພື່ອຄວາມສະດວກໃນການເຂົ້າເຖິງການບໍລິການ ແລະ ດຳເນີນທຸລະກຳ;
4. ຕ້ອງມີທຶນຮອນ ແລະ ຄວາມເຂັ້ມແຂງດ້ານການເງິນຕາມມາດຕະຖານ, ຜ່ານການປະເມີນຄວາມສາມາດຈາກທາງການ ແລະ ຕ້ອງມີຄວາມຮັບຜິດຊອບດ້ານການລາຍງານທຸລະກຳ ແລະ ການປະຕິບັດຕາມມາດຕະຖານ AML/CFT.

ການສະໝັກເປັນສະມາຊິກຂອງ ຕະຫຼາດແລກປ່ຽນເງິນຕາຕ່າງປະເທດລາວ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ຍື່ນຄຳຮ້ອງຂໍສະໝັກເປັນສະມາຊິກ ພ້ອມດ້ວຍເອກະສານທີ່ກ່ຽວຂ້ອງ ຕາມທີ່ ບໍລິສັດ ຕລຕ ກຳນົດໄວ້;
2. ບໍລິສັດ ຕລຕ ຄົ້ນຄວ້າພິຈາລະນາ;
3. ການອະນຸມັດ ແລະ ອອກໜັງສືຢັ້ງຢືນການເປັນສະມາຊິກ (ຖ້າຜ່ານການກວດສອບ).

### ມາດຕາ 26 ການຊຳລະ

1. ຜູ້ໃຊ້ບໍລິການ: ພາຍຫຼັງລະບົບຈັບຄູ່ແລກປ່ຽນສຳເລັດແລ້ວ ຜູ້ໃຊ້ບໍລິການຈະໄດ້ຮັບເງິນສະກຸນທີ່ສະເໜີຊື້-ຂາຍ ເຂົ້າໃນບັນຊີກະເປົາທັນທີ, ຫຼັງຈາກນັ້ນ ຜູ້ໃຊ້ບໍລິການ ສາມາດຖອນຈຳນວນເງິນດັ່ງກ່າວ ເຂົ້າບັນຊີຂອງຕົນທີ່ເປີດໄວ້ຢູ່ທະນາຄານທຸລະກິດຕາມການກຳນົດໄວ້. ນອກຈາກນັ້ນ, ຜູ້ໃຊ້ບໍລິການ ຍັງສາມາດຮັກສາຈຳນວນເງິນດັ່ງກ່າວໄວ້ໃນບັນຊີກະເປົາເງິນ ເພື່ອດຳເນີນທຸລະກຳໃໝ່ໄດ້.

2. ສະມາຊິກ:

- ການຊຳລະສະສາງຈຳນວນເງິນທີ່ຜູ້ໃຊ້ບໍລິການຝາກ-ຖອນໃນລະບົບ FXS ລະຫວ່າງສະມາຊິກທີ່ມີຜູ້ໃຊ້ບໍລິການຈາກທະນາຄານຂອງຕົນ ເຂົ້າຮ່ວມດຳເນີນທຸລະກຳລະບົບ FXS ຂອງມື້ປະຈຸບັນ ຈະຖືກຊຳລະສະສາງຜ່ານບັນຊີຂອງຕົນທີ່ເປີດໄວ້ຢູ່ ທຫລ ຕາມຈຳນວນເງິນທີ່ໄດ້ຫັກລົບກັນຕົວຈິງ ໃນວັນລັດຖະການຖັດໄປ (T+1);

- ການແບ່ງປັນຄ່າທຳນຽມ: ບໍລິສັດ ຕລຕ ຈະແບ່ງປັນຄ່າທຳນຽມໃນການແລກປ່ຽນຊື້-ຂາຍ ໃຫ້ສະມາຊິກ ແລະ ບໍລິສັດທີ່ມີສ່ວນຮ່ວມກັບການດຳເນີນທຸລະກຳທີ່ຈັບຄູ່ສຳເລັດ ຕາມສັດສ່ວນທີ່ໄດ້ຕົກລົງກັນເດືອນລະຄັ້ງ ພາຍໃນກຳນົດເວລາ 7 ວັນລັດຖະການ ນັບແຕ່ວັນທີ 25 ຂອງແຕ່ລະເດືອນເປັນຕົ້ນໄປ.

## ໝວດທີ 6
## ຂໍ້ຫ້າມ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 27 ຂໍ້ຫ້າມສຳລັບຜູ້ໃຫ້ບໍລິການ

ຫ້າມຜູ້ໃຫ້ບໍລິການ ມີພຶດຕິກຳ ດັ່ງນີ້:

1. ໃຫ້ບໍລິການລູກຄ້າທີ່ເປັນຜູ້ບໍ່ມີພູມລຳເນົາຢູ່ ສປປ ລາວ;
2. ເປີດເຜີຍຂໍ້ມູນຂອງລູກຄ້າ ແລະ ຂໍ້ມູນກ່ຽວກັບການເຮັດທຸລະກຳ ໂດຍບໍ່ໄດ້ຮັບອະນຸຍາດ;
3. ກົດໜ່ວງ, ຖ່ວງດຶງ, ປົກປິດ ຫຼື ເຊື່ອງອຳຂໍ້ມູນ ກ່ຽວກັບ ການດຳເນີນທຸລະກຳການຊື້-ຂາຍເງິນຕາຕ່າງປະເທດ;
4. ບິດເບືອນ, ປອມແປງ ເອກະສານ ຫຼື ຂໍ້ມູນ ກ່ຽວກັບ ການດຳເນີນທຸລະກຳການຊື້-ຂາຍເງິນຕາຕ່າງປະເທດ;
5. ສະໜອງຂໍ້ມູນໃຫ້ແກ່ ທຫລ ບໍ່ຄົບຖ້ວນ, ບໍ່ຖືກຕ້ອງຕາມຄວາມເປັນຈິງ, ລາຍງານຊັກຊ້າ ຫຼື ບໍ່ລາຍງານ;
6. ປະຕິເສດການຮ່ວມມື ໃນການກວດກາ ຂອງ ທຫລ ແລະ ເຈົ້າໜ້າທີ່ກ່ຽວຂ້ອງ ຂອງລັດ;
7. ປັ່ນປ່ວນການດຳເນີນທຸລະກິດ ຂອງຜູ້ມີສ່ວນຮ່ວມໃນໃນລະບົບ FXS ເຮັດໃຫ້ເກີດຄວາມເສຍຫາຍ ຕໍ່ການດຳເນີນງານ ຂອງພາກສ່ວນກ່ຽວຂ້ອງ;
8. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

### ມາດຕາ 28 ຂໍ້ຫ້າມສຳລັບຜູ້ໃຊ້ບໍລິການ

ຫ້າມຜູ້ໃຊ້ບໍລິການ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ການບໍລິການຂອງ ບໍລິສັດ ຕລຕ ເຂົ້າໃນການເຄື່ອນໄຫວ ທີ່ບໍ່ຖືກຕ້ອງຕາມກົດໝາຍເຊັ່ນ: ການຟອກເງິນ, ການຫຼອກລວງ, ຫຼື ການເຄື່ອນໄຫວນອກວັດຖຸປະສົງອື່ນໆ ທີ່ອາດເຮັດໃຫ້ເກີດຄວາມເສຍຫາຍ ຕໍ່ ບຸກຄົນ, ນິຕິບຸກຄົນອື່ນ ແລະ ຊື່ສຽງຂອງຕະຫຼາດ LFX;
2. ການສົ່ງຄຳສັ່ງ ທີ່ອາດຈະເຮັດໃຫ້ອັດຕາແລກປ່ຽນຜັນຜວນແຮງຢ່າງຜິດປົກກະຕິ ເຮັດໃຫ້ເກີດຄວາມເສຍຫາຍ ຕໍ່ການດຳເນີນງານຂອງຕະຫຼາດ LFX;
3. ໃສ່ຮ້າຍປ້າຍສີຕໍ່ຜູ້ໃຫ້ບໍລິການ ແລະ/ຫຼື ຜູ້ເຂົ້າຮ່ວມວຽກງານດັ່ງກ່າວ;
4. ປະຕິເສດການຮ່ວມມື ໃນການກວດກາຕະຫຼາດ LFX ຂອງ ທຫລ ແລະ ເຈົ້າໜ້າທີ່ກ່ຽວຂ້ອງຂອງລັດ;
5. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

**ມາດຕາ 29 ຂໍ້ຫ້າມສຳລັບສະມາຊິກ, ຜູ້ພັດທະນາ ແລະ ບໍລິສັດທີ່ມີສ່ວນຮ່ວມ**

ຫ້າມຜູ້ມີສ່ວນຮ່ວມອື່ນ ມີພຶດຕິກຳ ດັ່ງນີ້:

1. ເຂົ້າຊື້-ຂາຍເງິນຕ່າງປະເທດໃນຕະຫຼາດ LFX ໂດຍບໍ່ໄດ້ຮັບອະນຸຍາດຈາກ ທຫລ;
2. ປັ່ນປ່ວນອັດຕາແລກປ່ຽນ;
3. ປັ່ນປ່ວນການດຳເນີນທຸລະກິດ ຂອງຕະຫຼາດ LFX;
4. ປະຕິເສດການຮ່ວມມືໃນການກວດກາ ຂອງບໍລິສັດ ຕລຕ ແລະ ທຫລ ແລະ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ຂອງລັດ;
5. ຫ້າມເປີດເຜີຍຂໍ້ມູນຂອງລູກຄ້າ;
6. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການກ່ຽວຂ້ອງ.

**ມາດຕາ 30 ມາດຕະການຕໍ່ຜູ້ລະເມີດ**

ສະມາຊິກ, ບໍລິສັດທີ່ມີສ່ວນຮ່ວມກັບການດຳເນີນທຸລະກຳ ຜ່ານຕະຫຼາດແລກປ່ຽນເງິນຕາຕ່າງປະເທດລາວ (LFX) ແລະ ຜູ້ໃຊ້ບໍລິການ ທີ່ລະເມີດລະບຽບສະບັບນີ້ ຈະຖືກປະຕິບັດມາດຕະການສຶກສາອົບຮົມ ກ່າວເຕືອນ, ມາດຕະການທາງແພ່ງ ແລະ ອາຍາ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຕາມແຕ່ລະກໍລະນີ.

**ມາດຕາ 31 ມາດຕະການສຶກສາອົບຮົມ ແລະ ກ່າວເຕືອນ**

ສະມາຊິກ, ບໍລິສັດທີ່ມີສ່ວນຮ່ວມກັບການດຳເນີນທຸລະກຳ ຜ່ານຕະຫຼາດແລກປ່ຽນເງິນຕາຕ່າງປະເທດລາວ (LFX) ແລະ ຜູ້ໃຊ້ບໍລິການ ທີ່ລະເມີດລະບຽບສະບັບນີ້ເປັນຄັ້ງທຳອິດ, ບໍ່ສ້າງຄວາມເສຍຫາຍ ຫຼື ມີພຶດຕິກຳທີ່ເຂົ້າຂ່າຍເປັນການລະເມີດລະບຽບການສະບັບນີ້ ຫຼື ເຫັນວ່າມີຄວາມສ່ຽງຕໍ່ການດຳເນີນການຂອງຕະຫຼາດ ຈະຖືກມາດຕະການດັ່ງນີ້:

1. ສຶກສາອົບຮົມ ແລະ ກ່າວເຕືອນປາກເປົ່າຜ່ານໂທລະສັບ;
2. ກ່າວເຕືອນຢ່າງເປັນລາຍລັກອັກສອນ (ຢຸດໂຈະການເຄື່ອນໄຫວບັນຊີຊົ່ວຄາວ);
3. ປົດອອກຈາກການເປັນສະມາຊິກ/ປິດບັນຊີຜູ້ໃຊ້ຖາວອນ.

**ມາດຕາ 32 ມາດຕະການທາງ ແພ່ງ ແລະ ອາຍາ**

ສະມາຊິກ, ບໍລິສັດທີ່ມີສ່ວນຮ່ວມກັບການດຳເນີນທຸລະກຳ ຜ່ານຕະຫຼາດແລກປ່ຽນເງິນຕາຕ່າງປະເທດລາວ (LFX) ແລະ ຜູ້ໃຊ້ບໍລິການ ທີ່ລະເມີດລະບຽບສະບັບນີ້ ທີ່ສ້າງຄວາມເສຍຫາຍທາງແພ່ງໃຫ້ແກ່ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງອື່ນ ຈະຕ້ອງໄດ້ຮັບຜິດຊອບໃຊ້ແທນຕາມມູນຄ່າຄວາມເສຍຫາຍທີ່ຕົນເອງໄດ້ກໍ່ຂຶ້ນ.

ກໍລະນີເປັນການປະທຳຜິດທາງອາຍາ ຜູ້ລະເມີດຈະຖືກດຳເນີນຄະດີອາຍາຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຕາມກໍລະນີເບົາ ຫຼື ໜັກ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 33 ການຈັດຕັ້ງປະຕິບັດ**

ບໍລິສັດ ຕລຕ, ສະມາຊິກ, ບໍລິສັດທີ່ມີສ່ວນຮ່ວມກັບການດຳເນີນທຸລະກຳ ຜ່ານຕະຫຼາດແລກປ່ຽນເງິນຕາຕ່າງປະເທດລາວ (LFX) ແລະ ຜູ້ໃຊ້ບໍລິການທີ່ເປັນ ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງຕ່າງໆທີ່ເຂົ້າຮ່ວມດຳເນີນທຸລະກຳການ ຊື້-ຂາຍ ເງິນຕາຕ່າງປະເທດ ກັບ ເງິນກີບ ຢູ່ ຕະຫຼາດ LFX ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດລະບຽບສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 34 ຜົນສັກສິດ**

ລະບຽບສະບັບນີ້ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ຜູ້ອຳນວຍການ**

ສີສະຫວາດ ດວງສະຫວັນ